**ມາດຕາ 3. ຫຼັກການສ້າງຕັ້ງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ**

ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ສ້າງຕັ້ງຂຶ້ນຕາມຫຼັກການພື້ນຖານ ດັ່ງນີ້ :

- ດຳເນີນການເລືອກຕັ້ງ ໂດຍປະຊາຊົນພາຍໃນບ້ານ ດ້ວຍການລົງຄະແນນສຽງປິດລັບ ຫຼື ເປີດເຜີຍ ຕາມການເຫັນດີສ່ວນຫຼາຍຂອງປະຊາຊົນທີ່ມາຮ່ວມປະຊຸມ ;
- ຄະນະໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ຕ້ອງແມ່ນຜູ້ທີ່ໄດ້ຮັບສຽງສະໜັບສະໜູນສ່ວນຫຼາຍຂອງປະຊາຊົນທີ່ເຂົ້າຮ່ວມປະຊຸມນັ້ນ.
- ຄະນະໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານທີ່ໄດ້ຮັບການເລືອກຕັ້ງແລ້ວນັ້ນ ຈະຖືກຮັບຮອງ ແລະແຕ່ງຕັ້ງໂດຍເຈົ້າເມືອງ ຕາມການສະເໜີຂອງນາຍບ້ານໂດຍຜ່ານຫ້ອງການຍຸຕິທຳເມືອງ.

## ໝວດທີ II
## ທີ່ຕັ້ງ ແລະພາລະບົດບາດ

**ມາດຕາ 4. ທີ່ຕັ້ງຂອງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ**

ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ແມ່ນຫົວໜ່ວຍການຈັດຕັ້ງຍຸຕິທຳຮາກຖານຢູ່ບ້ານ ຊຶ່ງໄດ້ຮັບການສ້າງຕັ້ງໂດຍປະຊາຊົນ ແລະໄດ້ຮັບການຮັບຮອງໂດຍເຈົ້າເມືອງ, ເຄື່ອນໄຫວວຽກງານພາຍໃຕ້ການຊີ້ນຳທາງດ້ານການເມືອງ, ແນວຄິດຂອງຄະນະໜ່ວຍພັກ ແລະອົງການປົກຄອງບ້ານ, ຂຶ້ນກັບການກວດກາ, ແນະນຳທາງດ້ານວິຊາການຂອງຫ້ອງການຍຸຕິທຳເມືອງ.

**ມາດຕາ 5. ພາລະບົດບາດຂອງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ**

ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ມີພາລະບົດບາດ ດັ່ງນີ້:

1. ແກ້ໄຂຂໍ້ຂັດແຍ່ງຕ່າງໆພາຍໃນບ້ານດ້ວຍການປະນີປະນອມຕາມການສະເໜີຂອງຄູ່ກໍລະນີ ແລະແກ້ໄຂຄະດີອາຍາທີ່ເດັກເປັນຜູ້ກະທຳຜິດ;
2. ຊ່ວຍອົງການປົກຄອງບ້ານສຶກສາອົບຮົມ ແລະປຸກລະດົມປະຊາຊົນບັນດາເຜົ່າພາຍໃນບ້ານໃຫ້ມີສະຕິຕື່ນຕົວເຄົາລົບ ແລະປະຕິບັດລະບຽບກົດໝາຍຢ່າງເຂັ້ມງວດ;
3. ຊ່ວຍອົງການປົກຄອງບ້ານສ້າງບ້ານໃຫ້ເປັນປອດຄະດີ ແລະຮ່ວມມືໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຊຶ່ງຄູ່ກໍລະນີຢູ່ບ້ານຂອງຕົນ;
4. ປະສານສົມທົບກັບບັນດາອົງການທີ່ເຄື່ອນໄຫວວຽກງານຍຸຕິທຳ ແລະອົງການອື່ນໆທີ່ກ່ຽວຂ້ອງຢ່າງແໜ້ນແຟ້ນ ເພື່ອປົກປ້ອງສິດ ແລະຜົນປະໂຫຍດອັນຊອບທຳຂອງປະຊາຊົນພາຍໃນບ້ານ.